

# ຂ່າວ ປະຈຳເດືອນຕຸລາ



## ແຈ້ງເຕືອນ

### ກະກຽມກະຕຸກນ້ຳ

ໃຫ້ນັກຮຽນກະກຽມເອົາກະຕຸກນ້ຳມາພ້ອມ.

### ການສົ່ງຢາມາທີ່ໂຮງຮຽນ

ເວລາທີ່ຜູ້ປົກຄອງສົ່ງຢາມາໃຫ້ລູກຂອງທ່ານ ກະລຸນາຕື່ມຂໍ້ມູນ ໃສ່ແບບຟອມ ການນຳໃຊ້ຢາກ່ອນທີ່ຈະສົ່ງຢາມາທີ່ໂຮງຮຽນ.

## ງານທີ່ຈະມາຮອດນີ້

1. ວັນທີ 6 ເດືອນ ຕຸລາ ວັນຄູແຫ່ງຊາດ (ຈັດກິດຈະກຳພາຍໃນໂຮງຮຽນເລີ່ມເວລາ 2 ໂມງ) ຜູ້ປົກຄອງສາມາດເຂົ້າຮ່ວມກິດຈະກຳງານວັນຄູໄດ້
2. ວັນທີ 9-13 ເດືອນຕຸລາ ແມ່ນພັກການຮຽນການສອນ (ພັກໂຮງຮຽນ)
3. ວັນທີ 20 ເດືອນ ຕຸລາ ສະຫຼຸບປິດລາຍງານ ຄັ້ງທີ່ໜຶ່ງ
4. ວັນທີ 30 ເດືອນ ຕຸລາ ແມ່ນພັກການຮຽນການສອນ (ບຸນຊ່ວງເຮືອ)
5. ວັນທີ 27-28 ເດືອນພະຈິກ ແມ່ນພັກການຮຽນການສອນ (ບຸນທາດຫຼວງ)

ຄຣິກທີ່ນີ້ເພື່ອເຂົ້າໄປທີ່ປະຕິທິນ ຂອງໂຮງຮຽນ

### ພາລະກິດ:

ພວກເຮົາສ້າງແນວຄິດສາກົນພາຍໃນຊຸມຊົນທີ່ພົວພັນກັນດ້ວຍຫຼາຍພາສາ ແລະ ສຸມໃສ່ການພັດທະນານັກຮຽນໃຫ້ເກັ່ງຮອບດ້ານ, ຮູ້ຈັກຊ່ວຍເຫຼືອຜູ້ອື່ນ, ມີແນວຄິດເປີດກວ້າງ ແລະ ເປັນຜູ້ຮຽນຮູ້ທີ່ກ້າວໄກ

### ວິໄສທັດ:

ວິໄສທັດຂອງພວກເຮົາຄືການພັດທະນາບຸກຄົນໃຫ້ມີຄວາມໝັ້ນໃຈຮອບດ້ານ ແລະ ກ້າທີ່ຈະສະແດງສັກກະຍະພາບຂອງຕົນເອງອອກມາ



© INTERNATIONAL BACCALAUREATE ORGANIZATION 2018




# ການຫໍ່ເຂົ້າຕົ້ມ

ໃນອາທິດທີ່ແລ້ວນີ້ນັກຮຽນຫ້ອງອະນຸບານກຽມ ແລະ ນັກຮຽນຫ້ອງອະນຸບານ1 ຂອງພວກເຮົາໄດ້ມີປະສົບການທີ່ດີຮ່ວມກັນເຮັດກິດຈະກໍາທີ່ພິເສດຮ່ວມກັບຊັ້ນປະຖົມຫ້ອງ ປໍ1 ຫາ ປໍ4. ພວກເຂົາໄດ້ເຮັດການຫໍ່ເຂົ້າຕົ້ມຮ່ວມກັນເຊິ່ງເປັນເຂົ້າໜົມຫວານພື້ນເມືອງຂອງ ຄົນລາວ ແລະ ໄທ ສໍາລັບສ່ວນປະກອບທີສໍາຄັນໃນການເຮັດເຂົ້າຕົ້ມມີ ເຂົ້າໜ້ຽວ, ໝາກກ້ວຍສຸກ, ກະທິໝາກພ້າວ ແລະ ໃບກ້ວຍ ເຊິ່ງເຂົ້າຕົ້ມນີ້ມັກຈະຖືກກະກຽມສໍາລັບພິທີສູ່ຂວັນ, ງານບຸນ, ງານຕັກບາດ.

ຈຸດປະສົງໃນການເຮັດກິດຈະກໍາຄັ້ງນີ້ແມ່ນສົ່ງເສີມໃຫ້ນັກຮຽນລຸ້ນນ້ອຍຮຽນຮູ້ຈາກລຸ້ນໃຫ່ຍກວ່າເປັນແບບຢ່າງ ພ້ອມນັ້ນພວກເຂົາຍັງໄດ້ຮຽນຮູ້ກ່ຽວກັບຄວາມສໍາຄັນທາງດ້ານວັດທະນາທໍາຂອງວິທີການເຮັດເຂົ້າຕົ້ມ ແລະ ຄວາມມ່ວນຊື່ນກັບປະເພນີທີແຕກຕ່າງກັນໃນອາຊີຕາເວັນອອກສ່ຽງໃຕ້

ການເຮັດກິດຈະກໍາຮ່ວມກັນເປັນກຸ່ມນ້ອຍໆເຮັດໃຫ້ນັກຮຽນຮູ້ຈັກຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນການກະຕວງ, ການປະສົມ ແລະ ການຫໍ່ສ່ວນປະສົມຕ່າງໆ, ການຝຶກຝົນໃນການສື່ສານ, ການຮ່ວມມືເຊິ່ງກັນແລະກັນ, ພ້ອມນັ້ນນັກຮຽນຍັງໄດ້ນໍາໃຊ້ທັກສະທາງດ້ານຄະນິດສາດຂອງຕົນເອງຕໍ່
ກັບບັນຫາໃນຊີວິດຈິງ. ຫຼັງຈາກປຸງແຕ່ງ ແລະ ໜຶ້ງສຸກແລ້ວພວກເຂົາມີຄວາມສຸກກັບການຊີມລົດຊາດຂອງເຂົ້າຕົ້ມ ແລະ ແບ່ງປັນໃຫ້ກັບໝູ່ເພື່ອນ ແລະ ຄູ.
ຈຸດປະສົງຂອງກິດຈະກໍານີ້ແມ່ນເພື່ອສົ່ງເສີມໃຫ້ນັກຮຽນລະຫວ່າງນັກຮຽນໄດ້ຮຽນຮູ້ຮ່ວມກັນ ເຊິ່ງເປັນອີກດ້ານໜຶ່ງທີ່ສໍາຄັນຂອງ PYP and IB’s philosophy.

ພວກເຮົາມີຄວາມພາກພູມໃຈກັບນັກຮຽນຫ້ອງອະນຸບານກຽມ ແລະ ນັກຮຽນຫ້ອງອະນຸບານ1 ຂອງພວກເຮົາຫຼາຍທີ່ພວກເຂົາສະແດງໃຫ້ເຫັນເຖິງຄວາມຢາກຮູ້ຢາກເຫັນ, ມີຄວາມຄິດສ້າງສັນ ແລະ ມີຄວາມກະຕືລືລົ້ນໃນກິດຈະກໍານີ້. ນອກຈາກນີ້ພວກເຮົາຂໍຂອບໃຈນັກຮຽນຊັ້ນປະຖົມຫ້ອງ ປໍ1 ຫາ ປໍ4 ຂອງພວກເຮົາທີ່ໄດ້ໃຫ້ການສະໜັບສະໜູນ, ມີຄວາມຄົບລົບນັບຖື, ແລະ ເປັນຜູ້ໃຫ້ຄໍາແນະນໍາທີ່ເປັນປະໂຫຍດໃຫ້ແກ້ລຸ້ນນ້ອງ. ພວກເຮົາຫວັງວ່າຈະມີໂອກາດຫຼາຍຂຶ້ນສໍາລັບການເຮັດກິດຈະກໍາຮ່ວມກັນລະຫວ່າງຊັ້ນຮຽນ ແລະ ການຮຽນຮູ້ວັດທະນະທໍາຮ່ວມກັນໃນອະນາຄົດ.

ຄົນດຽວແມ່ນເຮັດໄດ້ໜ້ອຍ ແຕ່ຫຼາຍຄົນແມ່ນເຮັດໄດ້ຫຼາຍກວ່າ.

— *Helen Keller*

